ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກໍາມະການຄຸ້ມຄອງຫຼັກຊັບ

ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ

ເລກທີ 38 /ສຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 21 SEP 2021

# ແຈ້ງການ

ເຖິງ: ຕະຫຼາດຫຼັກຊັບລາວ ແລະ ບໍລິສັດຈົດທະບຽນ ໃນຕະຫຼາດຫຼັກຊັບລາວ.

ເລື່ອງ: ການຖືຮຸ້ນໄຂວ່ລະຫວ່າງ ບໍລິສັດຈົດທະບຽນ ກັບ ບໍລິສັດໃນກຸ່ມ ແລະ ກຸ່ມບໍລິສັດ.

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະບັບເລກທີ 79/ສພຊ, ລົງວັນທີ 3 ທັນວາ 2019;
- ອີງຕາມ ຄໍາສັ່ງວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດໍາເນີນທຸລະກິດ ຢູ່ ສປປ ລາວ ສະບັບເລກທີ 02/ນຍ, ລົງວັນທີ 1 ກຸມພາ 2018;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 013/ຄຄຊ, ລົງວັນທີ 17 ທັນວາ 2013.

ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຂໍຖືເປັນກຽດແຈ້ງມາຍັງ ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ກ່ຽວກັບການຖືຮຸ້ນໄຂວ່ ລະຫວ່າງ ບໍລິສັດຈົດທະບຽນ ກັບ ບໍລິສັດໃນກຸ່ມ ແລະ ກຸ່ມບໍລິສັດ ຂອງຕົນ ຊຶ່ງມີລາຍລະອຽດ ດັ່ງນີ້:

1. ຫ້າມບໍລິສັດຈົດທະບຽນ ຖືຮຸ້ນ ທາງກົງ ຫຼື ທາງອ້ອມ ໃນກຸ່ມບໍລິສັດ (ບໍລິສັດແມ່) ທີ່ມີອໍານາດຄວບຄຸມໃນບໍລິສັດຕົນ;
2. ຫ້າມບໍລິສັດຈົດທະບຽນ ອະນຸຍາດໃຫ້ບໍລິສັດໃນກຸ່ມ (ບໍລິສັດລູກ) ທີ່ຕົນມີອໍານາດຄວບຄຸມ ຖືຮຸ້ນ ທາງກົງ ຫຼື ທາງອ້ອມໃນບໍລິສັດຕົນ.
3. ອະນຸຍາດໃຫ້ ບໍລິສັດຈົດທະບຽນ ແລະ ບໍລິສັດໃນກຸ່ມ ຫຼື ກຸ່ມບໍລິສັດ ຂອງບໍລິສັດຈົດທະບຽນ ຖືຮຸ້ນໄຂວ່ລະຫວ່າງກັນໄດ້ ກໍລະນີ ຈໍາເປັນ ແຕ່ບໍ່ເກີນ ຊາວຫ້າສ່ວນຮ້ອຍ (25%) ຊຶ່ງຮຸ້ນດັ່ງກ່າວຈະເປັນຮຸ້ນທີ່ບໍ່ມີສິດອອກສຽງ ຫຼື ບໍ່ນັບເປັນອົງປະຊຸມຜູ້ຖືຮຸ້ນ.

ມອບໃຫ້ຕະຫຼາດຫຼັກຊັບລາວ ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງເພື່ອ ຕິດຕາມ ແລະ ກວດກາ ບໍລິສັດຈົດທະບຽນ ໃນການຈັດຕັ້ງປະຕິບັດ ເນື້ອໃນແຈ້ງການລະບັບນີ້ ໃຫ້ໄດ້ຮັບຜົນດີ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ຕະຫຼາດຫຼັກຊັບລາວ ແລະ ບໍລິສັດຈົດທະບຽນ ໃນຕະຫຼາດຫຼັກຊັບລາວ ພ້ອມກັນຈັດຕັ້ງປະຕິບັດເນື້ອໃນຂອງແຈ້ງການນີ້ດ້ວຍ.

ເຊັນແທນ ຫົວໜ້າສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ

ຮອງຫົວໜ້າສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ

ຄະນະກໍາມະການຄຸ້ມຄອງຫຼັກຊັບ ສໍານັກງານ ໑໑໒

ສຽວສະຫວາດ ທິລະກຸນ